ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 15 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 22 APR 2015

ສຳນັກງານ ຄຄຊ
ຂາເຂົ້າ
ເລກທີ 398
ວັນທີ 22 APR 2015
ໂທລະສັບ 021 217770

**ລາຍງານການເຄື່ອນໄຫວປະຈຳອາທິດ**

**ທີ 30/03/2015 ຫາ 03/04/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. <u>ວຽກງານການເມືອງແນວຄິດ</u>

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. <u>ວຽກງານວິຊາສະເພາະ</u>

### 1. <u>ສະພາບເສດຖະກິດເງິນຕາສາກົນ</u>

#### 1.1 <u>ອັດຕາແລກປ່ຽນສາກົນ</u>

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາດີ ເປັນຕົ້ນແມ່ນຕົວເລກການຂາຍບ້ານໃໝ່ເພີ່ມຂຶ້ນເປັນ 539.000 ຫຼັງ ໃນເດືອນ 2/2015 ຈາກ 500.000 ຫຼັງ ໃນເດືອນ 1/2015 ແລະ ດັດຊະນີພາກການຜະລິດເພີ່ມຂຶ້ນເປັນ 55,3 ໃນເດືອນ 3/2015 ຈາກ 55,1 ໃນເດືອນ 2/2015. ສ່ວນເງິນຢວນແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນດັດຊະນີຊີ້ວັດທາງດ້ານເສດຖະກິດຂອງ ສປ.ຈີນ ເພີ່ມຂຶ້ນເປັນ 98,85 ໃນເດືອນ 2/2015 ຈາກ 98,83 ໃນເດືອນຜ່ານມາ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 24/03/2015 | ອາທິດນີ້ 31/03/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ ໂດລາ | 1,0941 | 1,0785 | 1,45% |
| ໂດລາ/ເຢນ | 119,65 | 120,10 | -0,38% |
| ໂດລາ/ບາດ | 32,53 | 32,53 | -0,01% |
| ໂດລາ/ເປໂຊ | 44,69 | 44,72 | -0,05% |
| ໂດລາ/ຣູເປັຍ | 12.949,33 | 13.077,22 | -0,98% |
| ໂດລາ/ໂດລາສິງກະໂປ | 1,3669 | 1,3754 | -0,62% |
| ໂດລາ/ຢວນ | 6,2076 | 6,2018 | 0,09% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 1,72% ຈາກ 47,10 ໂດລາ/ບາເຣວ ມາເປັນ 47,91 ໂດລາ/ບາເຣວ ຍ້ອນນັກລົງທຶນເປັນຫ່ວງຕໍ່ການສະໜອງນ້ຳມັນ ພາຍຫຼັງເກີດບັນຫາຄວາມບໍ່ສະຫງົບຢູ່ຊູດານ ຍ້ອນການບຸກໂຈມຕີທາງອາກາດ ແລະ ທາງບົກ ຂອງປະເທດຊາອຸດີອາລາເບຍ ແລະ ບັນດາພັນທະມິດຊາດອາລັບ ທີ່ບຸກເຂົ້າໂຈມຕີກຸ່ມ Houthi ຈຶ່ງເຮັດໃຫ້ບໍ່ສາມາດຂົນສົ່ງນ້ຳມັນດິບຈຳນວນຫຼາຍກວ່າ 4 ລ້ານບາເຣວ ຈາກຊູດານ ໂດຍຜ່ານຊ່ອງແຄບ Bab el-Mandeb.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,48% ຈາກ 1.188,17 ໂດລາ/ອອນ ມາເປັນ 1.182,45 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,12% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,07% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ອ່ອນຄ່າລົງ 0,05% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,10% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,40% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,17% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,38% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,08% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 24/03/2015 | | | ອາທິດນີ້ 31/03/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.088,81 | 8.114,29 | 8.100,71 | 8.094,36 | 8.125,00 | 8.110,65 | -0,07% | -0,13% | -0,12% |
| ບາດ | 250,41 | 251,48 | 251,10 | 250,56 | 251,78 | 251,22 | -0,06% | -0,12% | -0,05% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.103,78 | 8.134,67 | 8.119,23 | 8.111,25 | 8.138,47 | 8.119,23 | -0,092% | -0,05% | -0,07% |
| ບາດ | 250,54 | 251,77 | 251,15 | 250,83 | 252,00 | 251,15 | -0,11% | -0,09% | -0,10% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,19% | 0,25% | 0,23% | 0,21% | 0,17% | 0,18% | | | |
| ບາດ | 0,05% | 0,12% | 0,02% | 0,11% | 0,09% | 0,08% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 0,08% ທຽບໃສ່ວັນທີ 27/03/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 39,45%.
- ປະລິມານເງິນ $M_2$ ຫຼຸດລົງ 0,76% ເມື່ອທຽບໃສ່ວັນທີ 27/03/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22,93%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 30/03/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 30,93 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 77,09 ລ້ານໂດລາ ແລະ ຂາຍໂດລາໄດ້ 46,16 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 945,73 ລ້ານບາດ (ໃນນີ້ ຊື້ບາດໄດ້ 397,88 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 1.343,61 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 14,33% ແຕ່ຫຼຸດລົງ 12,51% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 14,58 ລ້ານໂດລາ ແລະ ເງິນບາດມີ ຈໍານວນ 334,39 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 1,35 ລ້ານໂດລາ ແລະ ຂາຍບາດສຸດທິ ຈໍານວນ 73,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈໍານວນ 9,36 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈໍານວນ 1.324,34 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 23/03/2015 | | ອາທິດທີ 30/03/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 20,14 | 207,54 | 25,24 | 270,48 | 25,31% | 30,33% |
| - ທ/ຄທຸລະກິດອື່ນໆ | 40,82 | 197,28 | 51,85 | 127,40 | 27,01% | -35,42% |
| ລວມຊື້: | 60,96 | 404,82 | 77,09 | 397,88 | 26,45% | -1,71% |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21,66 | 231,62 | 26,36 | 164,13 | 21,70% | -29,14% |
| - ທ/ຄທຸລະກິດອື່ນໆ | 25,17 | 1.354,07 | 19,80 | 1.179,48 | -21,35% | -12,89% |
| ລວມຂາຍ: | 46,83 | 1.585,69 | 46,16 | 1.343,61 | -1,44% | -15,27% |
| ຊື້-ຂາຍສຸດທິ ທທກ | 14,13 | -1.180,87 | 30,93 | -945,73 | 118,86% | -19,91% |
| ຜິດດ່ຽງ ຊື້-ຂາຍ | 23,18 | -291,71 | 40,12 | -237,70 | 169,23% | 540,97% |
| ມູນຄ່າການຊື້-ຂາຍ | 107,79 | 1.990,51 | 123,24 | 1.741,48 | 14,33% | -12,51% |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,23 | 0,00 | 4,00 | 100,00 | | |
| - ທຫລ ຂາຍໃຫ້ ທທກ | 19,29 | 511,50 | 5,35 | 173,00 | | |
| ຊື້-ຂາຍສຸດທິ ທຫລ | -19,06 | -511,50 | -1,35 | -73,00 | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 10,51 | 389,29 | 14,58 | 334,39 | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,09 | 1.464,06 | 50,17 | 1.324,34 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 44,89 | 0,06 | 40,82 | 0,00 | | |
| ຊື້-ຂາຍສຸດທິ ທຫລ | -44,80 | 1.464,00 | 9,36 | 1.324,34 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 03/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,17% ຫຼຸດລົງ 0,24% ຈາກ 1,41% ໃນເດືອນ 02/2015.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 83,65 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 14,6% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 878 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 12,70% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 781,56 ຕື້ກີບ ເພີ່ມຂຶ້ນ 63,95% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (27/03-02/04/2015) ມີຈຳນວນ 1.411 ຄັ້ງ ໂດຍມີມູນຄ່າ 447,87 ຕື້ກີບ ເພີ່ມຂຶ້ນ 93,84% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 418 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.527,79 ຈຸດ ຫຼຸດລົງ 1,08% ເມື່ອທຽບໃສ່ອາ ທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 130.363 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 839,68 ລ້ານກີບ ຫຼຸດລົງ 80,02% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 43,00% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.907 ກີບ/ຮຸ້ນ ຫຼຸດລົງ 93 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 86.487 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 597,393 ລ້ານກີບ ເພີ່ມຂຶ້ນ 15,17% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 41,35% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນຢູ່ທີ່ 9,57%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.915 ກີບ/ຮຸ້ນ ເພີ່ມຂຶ້ນ 556 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 18.317 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 144,98 ລ້ານກີບ ຫຼຸດລົງ 96,02% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 54,01% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 9.400 ກີບ/ຮຸ້ນ, ໂດຍໃນອາທິດນີ້ແມ່ນບໍ່ມີການຈັບຄູ່ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.808 ກີບ/ຮຸ້ນ ຫຼຸດລົງ 92 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 25.559 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 97,31 ລ້ານກີບ ເພີ່ມຂຶ້ນ 143,11% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 26,45% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,73%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການເຮັດວຽກຮ່ວມກັບ CDB ໃນການເກັບກຳຂໍ້ມູນຄົ້ນຄວ້າໃນການກະກຽມຈັດຕັ້ງລະບົບ IT ເຂົ້າໃນໂຄງການ ATM Pool ທີ່ ທຫລ;
- ສຳເລັດການເຂົ້າຮ່ວມ ສຳມະນາ ໃນຫົວຂໍ້ “ASEAN Regional Prosecutors, Judges and Investigators Workshop” ທີ່ນະຄອນຫຼວງກົວລາລຳເປີ ປະເທດມາເລເຊຍ;
- ສຳເລັດການ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ IX ຂອງສະຫະພັນແມ່ຍິງ ທຫລ ທີ່ ສຫດ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສຳເລັດການພິມໃບຖອນເງິນສົດ ໃຫ້ແກ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 5.000 ຫົວ;
- ສຳເລັດການຕ້ອນຮັບບໍລິສັດ BS Capital, ປະເທດ ສ. ເກົາຫຼີ ເຂົ້າຢ້ຽມຢາມຂໍ່ານັບ ທ່ານ ຮອງຜູ້ວ່າການ ທຫລ;
- ສຳເລັດການຈັດກອງປະຊຸມກັບຊ່ຽວຊານໂຄງການ AFP ເພື່ອປຶກສາຫາລື ແລະ ສ້າງຄວາມເປັນເອກະພາບຕໍ່ກັບຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວໂຄງການ BOL-APF ກ່ອນລາຍງານຄະນະຜູ້ວ່າການ ແລະ ສຳເລັດການປັບປຸງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວໂຄງການ BOL-APF ຢູ່ຂັ້ນຕອນລໍຖ້າໂຄງການມີຄຳເຫັນ;
- ສຳເລັດການເຂົ້າຮ່ວມປະຊຸມກັບຊ່ຽວຊານ IMF ເພື່ອພັດທະນາຕະຫຼາດລະຫວ່າງທະນາຄານ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ສ້າງລະບົບໂປຣແກຣມ Client Utility ເພື່ອຊ່ວຍບັນດາສະຖາບັນການເງິນຈຸລະພາກໃນການເກັບກຳ ແລະ ລາຍງານຂໍ້ມູນສິນເຊື່ອຕາມ IFF;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າ ຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພາສີ ພິມມະກອນ